Lattanakone. (2023). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 9. Issue 2. Apr – Jun 2023. Page 138 – 145

# ປັດໄຈທີ່ສົ່ງຜົນຕໍ່ການດໍາເນີນທຸລະກິດຂອງຜູ້ປະກອບການທຸລະກິດຂະໜາດນ້ອຍ ໃນນະຄອນຫຼວງພະບາງ

**ເຜັດວັນເພັງ ລັດຕະນະກອນ[1], ສຸດທິດາ ຮຸ່ງແສງຟ້າ[2], ສຸກສະໝອນ ແສງຈັນ**

*ພາກວິຊາ ບໍລິຫານທຸລະກິດ ຄະນະເສດຖະສາດ ແລະ ການທ່ອງທ່ຽວ ມະຫາວິທະຍາໄລ ສຸພານຸວົງ,ສປປ ລາວ*

[1]*ຕິດຕໍ່ພົວພັນ: ເຜັດວັນເພັງ ລັດຕະນະກອນ, ພະແນກແຜນການ ແລະ ການລົງທຶນ ແຂວງຫຼວງພະບາງ, ເບີໂທ: +856 20 55771188,*
E-mail: raphetvanpheng@gmail.com

[2] *ສະຖາບັນຂົງຈື້, ມະຫາວິທະຍາໄລ ສຸພານຸວົງ, +856 20 5584 2828,*
E-mail: soudthida@gmail.com

***ມູນບົດຄວາມ:***
*ການສົ່ງບົດ: 17 ມີນາ 2023*
*ການປັບປຸງ: 15 ພຶດສະພາ 2023*
*ການຕອບຮັບ: 28 ພຶດສະພາ 2023*

## ບົດຄັດຫຍໍ້

ການສຶກສາຄັ້ງນີ້ມີຈຸດປະສົງ ເພື່ອສຶກສາລະດັບຄວາມສາມາດໃນການດໍາເນີນງານ ແລະ ຄວາມສໍາພັນບັນດາປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການດໍາເນີນງານຂອງການປະກອບທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ, ໂດຍກຸ່ມຕົວຢ່າງທີ່ໃຊ້ການສຶກສາຄັ້ງນີ້ ແມ່ນບັນດາຜູ້ປະກອບການທຸລະກິດຕາມເຂດຂອງ ນະຄອນຫຼວງພະບາງ ຈໍານວນ 198 ຮ້ານ. ເຄື່ອງມືທີ່ໃຊ້ເຂົ້າໃນການລວບລວມຂໍ້ມູນແມ່ນ ແບບສອບຖາມ ທີ່ມີລັກສະນະຄ່າ 5 ລະດັບຂອງ Likert Scale ທີ່ມີຄວາມໜ້າເຊື່ອຖືໃນລະດັບ 0.907 (90.7%) ແລະ ໂປຼແກຼມສໍາເລັດຮູບທາງສະຖິຕິ SPSS ໃນການວິເຄາະຂໍ້ມູນໄດ້ແກ່: ຄ່າຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ຄ່າເພຍ ແລະ ສົມຜົນທົດຖອຍພະຫຸຄູນ.

ຜົນຂອງການສຶກສາພົບວ່າ ຄວາມສາມາດໃນການການດໍາເນີນງານຂອງການປະກອບທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ, ໂດຍລວມແມ່ນຢູ່ໃນລະດັບດີຫຼາຍ. ໃນນັ້ນ ຢູ່ໃນລະດັບດີຫຼາຍທີ່ສຸດແມ່ນດ້ານການຜະລິດ/ບໍລິການ ແລະ ການບໍລິຫານຈັດການ, ສ່ວນດ້ານການເງິນ ແລະ ດ້ານການຕະຫຼາດແມ່ນ ຢູ່ໃນລະດັບດີ ຕາມລໍາດັບ. ປັດໄຈພາຍໃນ ທີ່ມີຄວາມສໍາພັນແບບເສັ້ນຊື່, ມີຜົນໄປໃນທິດທາງດຽວກັນ ແລະ ສົ່ງຜົນຕໍ່ການດໍາເນີນງານຂອງການປະກອບທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ ປະກອບມີ 3 ປັດໄຈ ຄື: ດ້ານຄວາມເຂັ້ມແຂງທາງການແຂ່ງຂັນ, ດ້ານຄວາມມີນະວັດຕະກໍາ, ດ້ານຄວາມເປັນຕົວເອງ ຕາມລໍາດັບ; ສ່ວນປັດໄຈພາຍນອກ ທີ່ມີຄວາມສໍາພັນແບບເສັ້ນຊື່, ມີຜົນໄປໃນທິດທາງດຽວກັນ ແລະ ສົ່ງຜົນຕໍ່ການດໍາເນີນງານຂອງການປະກອບທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ ມີພຽງປັດໄຈດຽວ ຄື: ດ້ານເສດຖະກິດ.

**ຄໍາສໍາຄັນ:** *ປັດໄຈທີ່ສົ່ງຜົນ, ທຸລະກິດຂະໜາດນ້ອຍ, ການດໍາເນີງານ, ນະຄອນຫຼວງພະບາງ*

# Factors Affecting of Small Business Operators in Luang Prabang City

**Phetvanpheng Lattanakone[1], Soudthida Hoongsengpha[2], Souksamone Sengchan**
*Department of Business Management, Faculty of Economics and Tourism Souphanouvong University, Lao PDR*

*[1]Correspondence:*
*Phetvanpheng Lattanakone, Luang Prabang Province Planning and Investment Department, Tel: +856 20 55771188, E-mail:* raphetvanpheng@gmail.com
*[2]Confucius Institute, Souphanouvong University, +856 20-5584 2828, E-mail:* soudthida@gmail.com

**Abstract**

This research aims to study the level of operational capability and the relationship between the factors affecting small business operators in Luang Prabang City. The sample for this research was the small businesses (SMEs) in Luang Prabang City (198 total). Using the five levels of the Likert Scale of the questionnaire to collect data, there is a reliability level of 0.907 (90.7%), and Using SPSS statistical software, the data are analyzed by frequency, percent, mean, standard Deviation, Pearson Correlation coefficient, and Multiple Regression Analysis.

The result of the research found that the capacity for operation of small businesses in Luang Prabang City appears to be at its highest level. Among them, the operation of small businesses in Luang Prabang City has the highest level in terms of production, service, and management. Then the financial and marketing aspects are at a good level, and the ability factors of small businesses that have a linear relationship and have the same effect and result in the operation of small businesses in Luang Prabang city include three factors: Competitive Aggressiveness, innovation, and Autonomy of Internal factors. While the External factor has a linear relationship, it has the same result as the economic factor that affects the operation of small businesses in Luang Prabang.

**Keywords:** *Factors Affecting, Small Business, Opreation, Luangprabang City*

## 1. ພາກສະເໜີ

ທຸລະກິດຂະໜາດນ້ອຍ (SME) ເປັນທຸລະກິດທີ່ມີຄວາມສຳຄັນຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ເປັນແຮງຜັກດັນທີ່ສຳຄັນໃນການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດຂອງປະເທດຊາດ. ນອກຈາກນັ້ນ, ທຸລະກິດຂະໜາດນ້ອຍ ຍັງເປັນສູນລວມການກໍ່ໃຫ້ເກີດການຜະລິດ, ການຄ້າ, ການລົງທຶນ, ການຈ້າງງານ ແລະ ການສ້າງລາຍຮັບໃນສັງຄົມ ພ້ອມທັງສິ່ງຜົນຕໍ່ການດຳລົງຊີວິດຂອງຄົນໃນສັງຄົມໃຫ້ດີຂຶ້ນ.

ທຸລະກິດຂະຫນາດນ້ອຍທີ່ຈະສ້າງຕົວເອງ, ຢູ່ລອດ, ປະສົບຜົນສຳເລັດ ແລະ ຈະເຕີບໂຕແບບຍືນຍົງ, ຕ້ອງມີພື້ນຖານອັນໜັກແໜ້ນ, ມີການປັບຕົວທີ່ດີ ແລະ ສາມາດເຄື່ອນໄຫວຢ່າງໜັກແໜ້ນໃນແຕ່ລະບາດກ້າວ, ໂດຍຜູ້ປະກອບການມີຄວາມຈຳເປັນໃນການພັດທະນາທັກສະການບໍລິຫານທຸລະກິດປະກອບມີ: ການຜະລິດ, ການບໍລິຫານ, ການຕະຫຼາດ, ການເງິນ, ການບັນຊີ ແລະ ການຄຸ້ມຄອງຊັບພະຍາກອນມະນຸດ. ການສຶກສາການບໍລິຫານ ທຸລະກິດ ຈະຊ່ວຍໃຫ້ຜູ້ປະກອບການສາມາດດຳເນີນການໄດ້ຢ່າງມີປະສິດທິພາບ ແລະ ສາມາດແຂ່ງຂັນໃນຕະຫຼາດພາຍໃນປະເທດ ແລະ ສາກົນໄດ້ດີຂຶ້ນ.

ການພັດທະນາເສດຖະກິດຂອງປະເທດ ຍັງຕ້ອງພົບກັບສິ່ງທ້າທາຍ ຈາກການປ່ຽນແປງສະພາບແວດລ້ອມທາງ

ດ້ານເສດຖະກິດທັງພາຍໃນ ແລະ ພາຍນອກປະເທດ ການຂ້າມຜ່ານຈາກລະບົບເສດຖະກິດແບບລວມສູນ ໄປສູ່ເສດຖະກິດແບບເສລີຕາມກົນໄກຕະຫຼາດ ການເຊື່ອມໂຍງດ້ານເສດຖະກິດ ກັບ ເສດຖະກິດລະດັບພາກພື້ນ ແລະ ໃນລະດັບໂລກ, ໃນສປປລາວ ພາກທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) ກວມອັດຕາສ່ວນເຖິງ 98% ຂອງທຸລະກິດທັງໝົດໃນປະເທດ. ນອກຈາກນັ້ນ, ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) ຍັງເປັນສູນລວມໃນການກໍ່ໃຫ້ເກີດການຜະລິດ, ການຄ້າ, ການບໍລິການ, ການລົງທຶນ, ການຈ້າງງານ ແລະ ການສ້າງລາຍຮັບໃນສັງຄົມພ້ອມທັງສິ່ງຜົນຕໍ່ກັບການດຳລົງຊີວິດຂອງປະຊາຊົນ (ກົມນະໂຍບາຍການຄ້າຕ່າງປະເທດ ຂອງປະເທດລາວ, 2018).

ປັດຈຸບັນ ສປປລາວ ໄດ້ມີການປັບປຸງ ແລະ ສົ່ງເສີມວຽກງານ SME ຂອງໃນສປປລາວ ຢ່າງກ້ວາງຂວາງ ໂດຍການນຳໃຊ້ນະໂຍບາຍເປີດກວ້າງດ້ານການລົງທຶນ, ດ້ານການຄ້າ, ດ້ານການບໍລິການ ແລະ ດ້ານການປະກອບທຸລະກິດໃໝ່, ເຊິ່ງເຮັດໃຫ້ສະພາບການດຳເນີນທຸລະກິດພາຍໃນປະເທດ ເກີດມີການແຂ່ງຂັນກັນນັບມື້ນັບຫຼາຍຂຶ້ນ ເຊິ່ງຖືໄດ້ວ່າເປັນການສ້າງຄວາມກົດດັນບໍ່ໜ້ອຍໃຫ້ແກ່ບັນດາຫົວໜ່ວຍວິສາຫະກິດ ແລະ ສິນຄ້າການຜະລິດພາຍໃນປະເທດ ແລະ ເປັນສາເຫດເຮັດໃຫ້ບັນດາທຸລະກິດເຫຼົ່ານັ້ນຫັນມາຮ່ວມມື ແລະ ອາໄສການລົງທຶນຈາກຕ່າງປະເທດເພື່ອເຮັດໃຫ້ທຸລະກິດຂອງຕົນເກີດຄວາມຢູ່ລອດ/ຄວາມຍືນຍົງ, ມີຄວາມທັນສະໄໝ, ມີນະວັດຕະກຳທີ່ໂດດເດັ່ນ, ມີຄວາມຫຼາກຫຼາຍ, ມີການພັດທະນາຢ່າງຕໍ່ເນື່ອງເຮັດໃຫ້ສິນຄ້າ ແລະ ການບໍລິການມີຄຸນນະພາບ/ປະສິດທິພາບສູງຂຶ້ນ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ (Soudthida, 2020).

ນະຄອນຫຼວງພະບາງ ມີບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍເພີ່ມຂຶ້ນເປັນຈຳນວນຫຼວງຫຼາຍໃນແຕ່ລະປີ ແລະໃນນັ້ນມີການຮ່ວມທຶນກັບຕ່າງປະເທດກວມອັດຕາສ່ວນເຖິງ 59% (ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຫຼວງພະບາງ, 2018) . ນັ້ນໄດ້ສະແດງໃຫ້ເຫັນວ່າ ຫາກບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍ ຫາກຂາດການພັດທະນາທັກສະ, ຄວາມຮູ້, ຄວາມສາມາດໃນການບໍລິຫານຈັດການ ແລະ ການດຳເນີນງານຂອງທຸລະກິດແລ້ວ, ບໍ່ວ່າຈະເປັນດ້ານຜົນຕອບແທນທາງທຸລະກິດ, ດ້ານການຕະຫຼາດ, ດ້ານບໍລິຫານການຈັດການ, ດ້ານເງິນທຶນ, ດ້ານການພັດທະນາຜະລິດຕະພັນ ແລະ ການບໍລິການ ນັ້ນກໍ່ຈະເຮັດໃຫ້ພົບບັນຫາ ແລະ ສິ່ງທ້າທາຍຫຼາຍຢ່າງອາດເຮັດໃຫ້ເກີດສະພາບທຸລະກິດບໍ່ສາມາດມີຄວາມຍືນຍົງ/ຂະຫຍາຍຕົວ, ເສຍປຽບທາງການແຂ່ງຂັນ ແລະ ກ້າວໄປເຖິງການທີ່ທຸລະກິດບໍ່ສາມາດຢູ່ລອດໄດ້.

ຈາກສະພາບການດັ່ງກ່າວ ຜູ້ສຶກສາຈຶ່ງໃຫ້ຄວາມສຳຄັນ ແລະ ຕ້ອງການທີ່ຈະສຶກສາສະພາບການດຳເນີນງານ ແລະ ຊອກຫາບັນດາປັດໄຈທີ່ມີຄວາມສຳພັນ ແລະ ມີຜົນໃນການດຳເນີນທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງ. ພ້ອມທັງເຮັດໃຫ້ຜູ້ປະກອບການສາມາດນຳໃຊ້ຂໍ້ມູນເຫຼົ່ານີ້ເພື່ອການວັດປະເມີນຫາຄວາມພ້ອມໃນການດຳເນີນທຸລະກິດ ຫຼື ເປັນຖານຂໍ້ມູນປະກອບເຂົ້າໃນການສ້າງແຜນ ແລະ ວາງແນວທາງການພັດທະນາປັບປຸງ-ແກ້ໄຂບັນຫາ ແລະ ສົ່ງເສີມທຸລະກິດພາຍໃນໃຫ້ເກີດຄວາມຍືນຍົງ ແລະ ຂະຫຍາຍຕົວໃນການດຳເນີນທຸລະກິດໄດ້.

ໂດຍຈຸດປະສົງໃນຄັ້ງນີ້ແມ່ນ 1) ເພື່ອສຶກສາລະດັບຄວາມສາມາດໃນການດຳເນີນງານຂອງຜູ້ປະກອບທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ ແລະ 2) ເພື່ອສຶກສາຄວາມສຳພັນບັນດາປັດໄຈໃນການພະຍາກອນລະຫວ່າງປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການດຳເນີນງານຂອງການປະກອບທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ.

## 2. ວິທີການດຳເນີນການຄົ້ນຄ້ວາ

### 2.1 ເຄື່ອງມືໃນການເກັບຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາແມ່ນແບບສອບຖາມເປັນແບບປະເມີນຄ່າ (Likert-type Scale,1932) ໃຫ້ຜູ້ຕອບແບບສອບຖາມໄດ້ສະແດງຄວາມຄິດເຫັນເປັນ 5 ລະດັບຕາມຄວາມເປັນຈິງໃນດ້ານຕ່າງໆ ແລະ ຜົນຂອງການຫາຄ່າຄວາມເຊື່ອໝັ້ນ (Reliability) ດ້ວຍຄ່າສຳປະສິດຂອງ Cronbach’s Alpha ໄດ້ຄ່າຄວາມເຊື່ອໝັ້ນເທົ່າກັບ 0.907 (90.7%) . ເຊິ່ງປັດໄຈທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ ແມ່ນປະກອບມີ: ປັດໄຈພາຍໃນ-ຄວາມສາມາດຂອງຜູ້

ປະກອບການ 5 ດ້ານ: ດ້ານຄວາມຫ້າວຫັນແລະການຮຽນຮູ້, ດ້ານຄວາມເປັນຕົວເອງ, ດ້ານຄວາມກ້າສ່ຽງ, ດ້ານການມີນະວັດຕະກໍາ ແລະ ດ້ານຄວາມເຂັ້ມແຂງທາງການແຂ່ງຂັນ (Dess, Lumpkin & Taylor: 2005) ແລະ ປັດໄຈດ້ານສະພາບແວດລ້ອມພາຍນອກຂອງອົງກອນທີ່ມີຄວາມສໍາຄັນແລະກ່ຽວຂ້ອງກັບການດໍາເນີນງານໃນອົງກອນທີ່ປະກອບດ້ວຍ: ດ້ານການເມືອງ, ດ້ານເສດຖະກິດ, ດ້ານສັງຄົມ-ວັດທະນະທໍາ ແລະ ເຕັກໂນໂລຊີ (Tanya Sammut-Bonnici and David Galea, 2015)

## 2.2 ວິທີການຄົ້ນຄ້ວາ

ເປັນການສຶກສາຄົ້ນຄວ້າແບບປະລິມານໂດຍການລົງສໍາຫລວດ (Survey Research). ກຸ່ມຕົວຢ່າງທີ່ໃຊ້ການສຶກສາ ແມ່ນບັນດາຜູ້ປະກອບການທຸລະກິດຂະໜາດນ້ອຍໃນເນະຄອນຫຼວງພະບາງ ຈໍານວນ 198 ຮ້ານ. ຫຼັງຈາກນັ້ນນໍາຂໍ້ມູນມາກວດກາ ສ້າງຖານປ້ອນຂໍ້ມູນ ແລະ ທໍາການວິເຄາະຫາຄ່າສະຖິຕິຕ່າງໆ ດ້ວຍການນໍາໃຊ້ໂປຣແກຣມສໍາເລັດຮູບສະຖິຕິ (SPSS 24.0) ໃນການປະມວນຜົນປະກອບມີ: ຄ່າຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ຄ່າເພຍສັນ (Pearson correlation) ແລະ ສົມຜົນທົດຖອຍພະຫຸຄູນ (Multiple Regression) ໃນລະດັບຄວາມສໍາຄັນທາງສະຖິຕິ P≤ 0.10.

## 2.3 ສົມມຸດຖານການສຶກສາ

ປັດໄຈດ້ານຄວາມສາມາດຂອງຜູ້ປະກອບການ ແລະ ດ້ານສະພາບແວດລ້ອມພາຍນອກອົງກອນ ມີຄວາມສໍາພັນ ແລະ ສົ່ງຜົນຕໍ່ກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ.

## 2.4. ກອບແນວຄິດໃນການວິເຄາະ




# 3. ຜົນໄດ້ຮັບ

## 3.1 ສະພາບການດໍາເນີນທຸລະກິດຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງ

ຜົນການສຶກສາພົບວ່າ ຜູ້ປະກອບການທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງທີ່ເປັນກຸ່ມຕົວຢ່າງທີ່ໃນຄັ້ງນີ້ ໂດຍສ່ວນຫຼາຍແມ່ນເປັນ ເພດຍິງ (64.6%), ມີອາຍຸລະຫວ່າງ 35-44 ປີ (52.0%), ທີ່ມີສະຖານະພາບແຕ່ງງານແລ້ວ (78.3%), ມີການສຶກສາລະດັບປະລິນຍາຕີ (49.5%) ແລະ ປະສົບການດໍາເນີນທຸລະກິດ (57.6%). ສ່ວນການປະກອບທຸລະກິດສ່ວນໃຫຍ່ແມ່ນທຸລະກິດບໍລິການ (51.5%) ທີ່ມີການດໍາເນີນງານລະຫວ່າງ 7-9 ປີ (54.5%) ເປັນທຸລະກິດສ່ວນບຸກຄົນ (49.5%) ທີ່ໃຊ້ທຶນຕົນເອງ (63.6%), ທີ່ໃຊ້ແຮງງານໃນການດໍາເນີນງານລະຫວ່າງ 1-5 ຄົນ ທີ່ມີມູນ

ຄ່າການລົງທຶນ (ທຶນຈົດທະບຽນ)<200 ລ້ານກີບ (66.2%).

### 3.2 ຄວາມສາມາດໃນການດຳເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ

ຜົນການສຶກສາພົບວ່າ ກຸ່ມຕົວຢ່າງທີ່ມີຄວາມຄິດເຫັນ ກ່ຽວກັບການຄວາມສາມາດໃນການດຳເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ ແມ່ນຢູ່ໃນລະດັບດີຫຼາຍ, ເຊິ່ງມີຄ່າສະເລ່ຍ $\bar{X}$ = 4.22. ໂດຍມີລາຍລະອຽດ ກ່ຽວກັບການຄວາມສາມາດໃນການດຳເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງໃນແຕ່ລະດ້ານ ດັ່ງຕາຕະລາງລຸ່ມນີ້:

ກຸ່ມຕົວຢ່າງທີ່ມີຄວາມຄິດເຫັນຕໍ່ການດຳເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ ໂດຍພາບລວມແມ່ນຢູ່ໃນລະດັບດີຫຼາຍ ເມື່ອພິຈາລະນາລະອຽດແລ້ວ ຈະພົບວ່າ ການດຳເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງທີ່ຢູ່ໃນລະດັບດີຫຼາຍແມ່ນປະກອບມີ ດ້ານການຜະລິດ/ບໍລິການ ແລະ ດ້ານການບໍລິຫານຈັດການຕາມລຳດັບ ທີ່ມີຄ່າສະເລ່ຍລະຫວ່າງ 4.21 ຫາ 5.00. ສ່ວນດ້ານການເງິນ ແລະ ດ້ານການຕະຫຼາດ ແມ່ນ ຢູ່ໃນລະດັບດີ ຕາມລຳດັບທີ່ມີຄ່າສະເລ່ຍລະຫວ່າງ 3.41 ຫາ 4.20.

### 3.3 ການວິເຄາະປັດໄຈທີ່ສົ່ງຜົນຕໍ່ການດຳເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ

ການທົດສອບຄວາມສຳພັນດ້ວຍຄ່າຂອງ Pearson Correlation ກ່ຽວກັບປັດໄຈທີ່ມີຄວາມສຳພັນກັບ ຄວາມສາມາດໃນການດຳເນີນງານຂອງຜູ້ປະກອບການ ທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ. ໂດຍປັດໄຈທີ່ໃຊ້ເຂົ້າໃນການວິເຄາະຄັ້ງນີ້ມີທັງໝົດ 9 ປັດໄຈທີ່ໃຊ້ເປັນຕົວປ່ຽນອິດສະຫຼະ ແລະ ພົບວ່າ ປັດໄຈດ້ານຄວາມຫ້າວຫັນ ແລະ ການຮຽນຮູ້ ($X_1$) ທີ່ຄວາມສຳພັນກັນກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ ໃນລະດັບຕໍ່າສຸດ ທີ່ມີຄ່າຄວາມສຳພັນສະເລ່ຍ ນ້ອຍກ່ວາ 0.20. ສ່ວນປັດໄຈດ້ານຄວາມກ້າສ່ຽງ ($X_3$), ດ້ານການເມືອງ ($X_6$) ແລະ ດ້ານເສດຖະກິດ ($X_7$) ແມ່ນມີຄວາມສຳພັນກັນກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ ໃນລະດັບຕໍ່າ ທີ່ມີຄ່າຄວາມສຳພັນສະເລ່ຍ ລະຫວ່າງ 0.20 - 0.40 ແລະ ປັດໄຈດ້ານການເປັນຕົວເອງ ($X_2$), ດ້ານການມີນະວັດຕະກຳ ($X_4$), ດ້ານຄວາມເຂັ້ມແຂງທາງການແຂ່ງຂັນ ($X_5$), ດ້ານສັງຄົມ-ວັດທະນະທຳ ($X_8$) ແລະ ດ້ານເຕັກໂນໂລຊີ ($X_9$) ແມ່ນມີຄວາມສຳພັນກັນກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ ໃນລະດັບປານກາງ ທີ່ມີຄ່າຄວາມສຳພັນສະເລ່ຍນ ລະຫວ່າງ 0.41 - 0.60 (Sig.= 0.000<0.05).

ຜົນການວິເຄາະການຖົດຖອຍພະຫຸຄູນໃນການພະຍາກອນກ່ຽວກັບ ປັດໄຈທີ່ສົ່ງຜົນຕໍ່ການດຳເນີນງານຂອງຜູ້ປະ ກອບການທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ. ທັງໝົດ 9 ປັດໄຈໃນການຄັດເລືອກເຂົ້າສູ່ການວິເຄາະເພື່ອການພະຍາກອນ ພົບວ່າ ມີພຽງ 3 ປັດໄຈທີ່ສົ່ງຜົນຕໍ່ການດຳເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງ ຄື: ປັດໄຈພາຍໃນ-ຄວາມສາມາດຂອງຜູ້ປະກອບການດ້ານຄວາມເຂັ້ມແຂງທາງການແຂ່ງຂັນ ($X_5$), ດ້ານຄວາມມີນະວັດຕະກຳ ($X_4$) ຂອງທຸລະກິດ ແລະ ປັດໄຈພາຍນອກຂອງທຸລະກິດໃນດ້ານເສດຖະກິດ ($X_7$) ທີ່ມີຄວາມສຳພັນກັນແບບເສັ້ນຊື່ກັບການດຳເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ. ໂດຍຕົວປ່ຽນເຫຼົ່ານີ້ມີຄວາມສຳພັນທາງບວກ ແລະ ມີຜົນຕໍ່ການພະຍາກອນໃນລະດັບ 70% (R=0.700) ທີ່ມີຄ່າຄວາມຊັດເຈນ 49% ($R^2$= 0.490). ໂດຍສາມາດສ້າງສົມຜົນໃນການພະຍາກອນໃນຮູບແບບດັ່ງນີ້:

$$\hat{Y} = 0.251\,X_5+0.219X_4+0.135X_7$$

### 4. ວິພາກຜົນ

ຈາກການສຶກສາລະດັບຄວາມສາມາດໃນການດຳເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງ. ໂດຍລວມແມ່ນຢູ່ໃນລະດັບດີຫຼາຍ, ເຊິ່ງມີຄວາມສອດຄ່ອງກັບການສຶກສາຂອງ Nuttavut Wiset (2012) ທີ່ສຶກສາກ່ຽວກັບ ປັດໄຈໃນການດຳເນີນທຸລະກິດຂອງການເປັນຜູ້ປະກອບການທຸລະກິດຂະໜາດ

ນ້ອຍ ແລະ ກາງ (SMEs) ໃນຈັ່ງຫວັດ ນົນທະບູລີ ປະເທດໄທ ແລະ ມີລະດັບຄວາມສາມາດໃນການດໍາເນີນງານຂອງຜູ້ປະກອບການທຸລິກິດຂະໜາດນ້ອຍ (SMEs) ທີ່ສອດຄ່ອງ ແລະ ຄືກັນນັ້ນແມ່ນ: ດ້ານບໍລິຫານຈັດການ, ດ້ານການເງິນ ແລະ ດ້ານດານຕະຫຼາດ ຕາມລໍາດັບ ເຊິ່ງມີຄວາມສອດຄ່ອງກັບແນວຄິດຂອງ Nantana Bunheng (2010) ທີ່ກ່າວໄວ້ວ່າ ຜູ້ປະກອບການຕ້ອງບໍລິຫານດ້ວຍຕົນເອງໃຫ້ຫຼາຍທີ່ສຸດ ໂດຍມີນະໂຍບາຍການບໍລິຫານຈັດການທີ່ຊັດເຈນ ມີລະບົບທີ່ສາມາດວັດແລະກວດສອບໄດ້ທຸກຂັ້ນຕອນ ແລະ ມີການວາງແຜນແຕ່ລະໄລຍະ, ຜູ້ປະກອບການຕ້ອງດູແລເອົາໃຈໃສ່ໃນສະພາບຄ່ອງທາງການເງິນໃຫ້ໝັ້ນຄົງ ແລະ ໜ້າເຊື່ອຖື ແລະຕ້ອງມີການວາງແຜນກຽມພ້ອມສໍາລັບການຂາຍກິດຈະການ ແລະ ຕ້ອງຄວບຄຸມ-ກວດກາບັນຊີປະຈໍາວັນ ພ້ອມທັງຕ້ອງມີການຄວບຄຸມທາງການຕະຫຼາດໃຫ້ດີທີ່ສຸດ ໂດຍສິນຄ້າຕ້ອງມີຄວາມໂດດເດັ່ນ ແລະໃໝ່ຕະຫຼອດ. ສ່ວນຄວາມສາມາດການດໍາເນີນທຸລະກິດໃນດ້ານການຜະລິດ/ບໍລິການ ໂດຍລວມແມ່ນຢູ່ໃນລະດັບດີ ເຊິ່ງມີຄວາມສອດຄ່ອງກັບການສຶກສາຂອງ Nantana Bunheng (2010) ທີ່ສຶກສາປັດໄຈສູ່ຄວາມສໍາເລັດຂອງຜູ້ປະກອບການທຸລະກິດໃນເຂດກຸງເທບ ໄດ້ກ່າວໄວ້ວ່າ: ຕ້ອງມີເຄື່ອງມືທັນສະໄໝ ໃນການຂະບວນການຜະລິດ ແລະ ຜູ້ປະກອບການຕ້ອງໝັ່ນຊອກຫາຄວາມຮູ້ ແລະ ເທັກນິກ/ນວັດຕະກໍາໃນການຜະລິດຢູ່ສະເໝີ ແລະ ຕ້ອງມີການຜະລິດສິນຄ້າທີ່ຄຸນນະພາບ ແລະ ມາດຕະຖານ. ດັ່ງນັ້ນ, ບັນດາຜູ້ປະກອບການທຸລະກິດຂະໜາດນ້ອຍ ໃນນະຄອນຫຼວງພະບາງ ຄວນຖືເອົາຄວາມສໍາຄັນຂອງບັນດາປັດໄຈເຫຼົ່ານີ້ເພື່ອນໍາໃຊ້ເຂົ້າໃນການດໍາເນີນງານໃນທຸລະກິດຂອງທ່ານເພື່ອເຮັດໃຫ້ທຸລະກິດຂອງທ່ານສາມາດປະສົບຜົນສໍາເລັດໃນການດໍາເນີນທຸລະກິດ.

ປັດໄຈທີ່ສົ່ງຜົນຕໍ່ການດໍາເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ ພົບວ່າ ປັດໄຈພາຍໃນ-ຄວາມສາມາດຂອງຜູ້ປະກອບການໃນດ້ານຄວາມເຂັ້ມແຂງທາງການແຂ່ງຂັນ ແລະ ຄວາມມີນະວັດຕະກໍາຂອງທຸລະກິດແມ່ນປັດໄຈທີ່ສົ່ງຜົນໃນທິດທາງບວກ ແລະ ເປັນທິດທາງດຽວກັບກັບການດໍາເນີນທຸລະກິດຂອງການເປັນຜູ້ປະກອບການທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງ ເຊິ່ງມີຄວາມສອດຄ່ອງກັບການສຶກສາຂອງ Nantaporn Dumrongpong ສຶກສາປັດທີ່ສົ່ງຜົນຕໍ່ຄວາມສາມາດໃນການດໍາເນີນທຸລະກິດຂອງຜູ້ປະກອບການທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ເພື່ອຮອງຮັບເສດຖະກິດດີຈິຕອນໃນປະເທດໄທ. ໄດ້ກ່າວໄວ້ວ່າອິດທິພົນທາງກົງທີ່ົງຜົນຕໍ່ຄວາມສາມດໃນການດໍາເນີນທຸລະກິດໃຫ້ມີຄວາມຍືນຍົງຂອງຜູ້ປະກອບການທຸລະກິດຂະໜາດນ້ອຍແລະ ຂະໜາດກາງ (SMEs). ດັ່ງນັ້ນ, ການພັດທະນາ-ອອກແບບຜະລິດຕະພັນ (ການມີນະວັດຕະກໍາ) ໂດຍຜູ້ປະກອບການຕ້ອງມີຄວາມຄິດສ້າງສັນ, ມີການສ້າງຜະລິດຕະພັນໃໝ່ໆ ເຊິ່ງຈະຊ່ວຍໃຫ້ທຸລະກິດສາມາດມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນ ພ້ອມທັງສ້າງຄາມຍືນຍົງໃນຍຸກເສດຖະກິດດິຈິຕອນໄດ້. ປັດໄຈພາຍນອກກິດຂອງທຸລະກິດໃນດ້ານເສດຖະກິດ ແມ່ນປັດໄຈທີ່ສົ່ງຜົນໃນທິດທາງບອກ ແລະ ເປັນທິດທາງດຽວກັບການດໍາເນີນງານຂອງທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງ ເຊິ່ງມີຄວາມສອດຄ່ອງກັບການສຶກສາຂອງ ເຊົາວະລິດ ປະສິດ ທີ່ສຶກສາປັດໄຈພາຍນອກທີ່ມີຄວາມສໍາພັນກັບຄວາມສໍາເລັດຂອງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ໃນຈັ່ງຫວັດ ຊະເຊີງເຊົາ ປະເທດໄທ ທີ່ສຶກສາພົບວ່າ ປັດໄຈພາຍນອກດ້ານເສດຖະກິດມີຄວາມສໍາພັນທາງບວກກັບຄວາມສໍາເລັດຂອງທຸລະກິດ. ໂດຍກ່າວວ່າ ປັດໄຈທາງເສດຖະກິດມີຜົນກະທົບຫຼາຍທີ່ສຸດຕໍ່ຄວາມສາມາດໃນການດໍາເນີນທຸລະກິດ (SMEs) ແລະ ເປັນປັດໄຈທີ່ຜູ້ປະກອບການບໍ່ສາມາດອອກແບບກໍານົດໄດ້ເອງ ເຊັ່ນ: ການເພີ່ມຂຶ້ນຂອງອັດຕາເງິນເຟີ້, ລາຄາວັດຖຸດິບ ແລະ ປັດໄຈການຜະລິດຕ່າງໆ ໃນການຜະລິດ ແລະ ບໍລິການ. ດັ່ງນັ້ນ, ຜູ້ປະກອບການທຸລະກິດຂະໜາດນ້ອຍຕ້ອງມີການພະຍາກອນ ຫຼື ມີການວາງແຜນສໍາຮອງສໍາລັບການແກ້ໄຂບັນຫາ ຫຼື ຮອງຮັບສໍາລັບອະນາຄົດເພື່ອຫຼຸດຄວາມສ່ຽງໃນການດໍາເນີນທຸລະກິດ.

## 5. ສະຫຼຸບ

ລະດັບຄວາມສາມາດການດໍາເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະ

ບາງ ໂດຍພາບລວມແມ່ນຢູ່ໃນລະດັບດີຫຼາຍ ເຊິ່ງໃນນັ້ນ ຄວາມສາມາດຂອງຜູ້ປະກອບການທຸລະກິດຂະໜາດນ້ອຍ ໃນດ້ານການຜະລິດ/ບໍລິການ ແລະ ດ້ານການບໍລິຫານຈັດການ ແມ່ນສາມາດເຮັດໄດ້ໃນລະດັບດີຫຼາຍ, ສ່ວນຄວາມສາມາດຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນດ້ານການເງິນ ແລະ ດ້ານການຕະຫຼາດ ແມ່ນ ສາມາດເຮັດໄດ້ຢູ່ໃນລະດັບດີ.

ປັດໄຈພາຍໃນ-ຄວາມສາມາດຂອງຜູ້ປະກອບການທີ່ສົ່ງຜົນ ຫຼື ມີອິດທິພົນຕໍ່ການການດໍາເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ ປະກອບມີ: ຄວາມເຂັ້ມແຂງທາງການແຂ່ງຂັນ ແລະ ຄວາມມີນະວັດຕະກໍາ ຂອງທຸລະກິດ. ສ່ວນປັດໄຈພາຍນອກຂອງທຸລະກິດທີ່ສົ່ງຜົນ ຫຼື ມີອິດທິພົນຕໍ່ການການດໍາເນີນງານຂອງຜູ້ປະກອບການທຸລະກິດຂະໜາດນ້ອຍໃນ ນະຄອນຫຼວງພະບາງ ປະກອບມີ ດ້ານເສດຖະກິດ. ເຊິ່ງປັດໄຈເຫຼົ່ານີ້ມີຄວາມສໍາພັນກັນແບບເສັ້ນຊື່ ແລະ ສົ່ງຜົນໃນທາງບວກທີ່ມີລະດັບຄວາມສໍາຄັນທາງສະຖິຕິ 0.05 = 95%.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Bamford, E. Charles and Garry, D. Bruton. (2006). Small Business management: A Framework for Success. Singapore: Thomson South – Western.

Chutima Wangbenmad. (2014). The Key Success Factors for Small and Medium Enterprises in Muang Hadyai, Songkha Province" [J]. Journal of Management Sciences, Vol. 1 (1):

Department of Industry and Commerce of Luangprabang Porvince. (2018). The conclusion evaluates the results of the implementation of the socio-economic development plan in 2018.

Dess,G.G., Lumpkin, G.T. & Taylor, M.L. (2005). Strategic Management : Creating Competitive Advantage (2nd ed.). New York : McGraw-Hill.

Foley P and Green H. (1989). Small Business Success. London: Paul Chapmen Publishing Ltd.

Kotler, Philip. (2003). Marketing Management. N.l. : Prentice Hall.

Likert Rensis (1932). "A Technique for the Measurement of Attitudes" archives of Psychilogy. 104.

Nantana Bunheng. (2010). Factors to the success of bakery business operators in Bangkok. Master of Business Administration degree in Management Science, Sukhothai Thammathiraj University.

Nantaporn Dumrongpong. (2018). "Factors Affecting Business Capacity of the SMEs Entrepreneur for Digital Economy in Thailand" [J]. Journal of Modern Management Science, 11(1).

Nuttavut Wiset. (2012). Factors Influencing Business Operations of Small and Medium Enterprise Entrepreneurs in Nonthaburi Province Research paper of the University of Thailand.

Roberta S. Russell & Bernard W. (2011). Taylor, "Operation Management", Jone Willey & Sons (Asia) Pte Ltd:210.

Soudthida, H. (2020). Factors to success as a small business entrepreneur in Luang Prabang [ J]. Souphanouvong University Academic Journal,

Tanya Sammut-Bonnici and David Galea. (2015). PEST Analysis. Malta: University of Malta.

Thongvanh, S. (2012). "Factors Affecting toward Growth of Small and Medium Enterprises in Lao PDR" [J]. Journal of Interdisciplinary Research: Graduate Studies, 1(2).

Yaovalith Prashit. (2018). External factors that relate to the success of small and medium-sized businesses (SMEs) in Saengsao Province, Thailand" Thesis of Rajahmundry University of Technology, Buri, Thailand.